DEPARTMENT OF HEALTH

# ເປັນຫຍັງປະຊາຊົນ ຈຶ່ງຕ້ອງສັກວັກຊີນສຳລັບໂຄວິດ-19 ຖ້າພວກເຮົາຕ້ອງການເຂັມກະຕຸ້ນ?

## ຂໍ້ຄວາມ

[ຈັງຫວະເພັງ]

[ການເລົ່າເລື່ອງ]

ວັກຊີນແມ່ນການປ້ອງກັນທີ່ດີທີ່ສຸດທີ່ພວກເຮົາມີຕໍ່ໂຄວິດ-19. ວັກຊີນໄວ້ສຳລັບການປ້ອງກັນທີ່ດີທີ່ສຸດ, ໂດຍສະເພາະຕໍ່ການເຈັບປ່ວຍຮຸນແຮງ ແລະ ເສຍຊີວິດ.

ມັນສາມາດຊ່ວຍຊຸມຊົນຂອງທ່ານໂດຍການຫຼຸດຜ່ອນການແຜ່ເຊື້ອໄວຣັສ. ອັນນີ້ແມ່ນເພື່ອປ້ອງກັນຜູ້ທີ່ຍັງບໍ່ສາມາດໄດ້ຮັບຢາວັກຊີນ ຫຼື ຜູ້ທີ່ບໍ່ຕອບສະໜອງຕໍ່ຢາວັກຊີນ ເຊັ່ນກັນ.

ວັກຊີນແມ່ນມີປະສິດທິພາບໃນການຕໍ່ສູ້ກັບການກາຍພັນຂອງພະຍາດທີ່ພວກເຮົາພົບໃນທຸກວັນນີ້ – ແຕ່ວ່າທຸກໆການຕິດເຊື້ອໃໝ່ ໄດ້ເຮັດໃຫ້ໄວຣັສມີໂອກາດປ່ຽນແປງ ແລະ ມີຄວາມເປັນໄປໄດ້ໃນການຫຼົບໜີຈາກວັກຊີນຂອງພວກເຮົາ.

ໂຄວິດ-19 ເຂັມກະຕຸ້ນ, ຄືກັບເຂັມກະຕຸ້ນສຳລັບການວັກຊີນຊະນິດອື່ນໆ, ຊ່ວຍຍົກລະດັບພູມຕ້ານທານຂອງການຕໍ່ສູ້ກັບໄວຣັສ ໃຫ້ສູງຂຶ້ນ.

ແຕ່ການໄດ້ຮັບການປ້ອງກັນເບື້ອງຕົ້ນນັ້ນຍັງຄົງເປັນສິ່ງທີ່ສຳຄັນຫຼາຍ.

ຖ້າທ່ານຍັງບໍ່ໄດ້ຮັບວັກຊີນ, ໄດ້ເວລາແລ້ວ. ເຂົ້າເບິ່ງ vaccines.gov ເພື່ອຄົ້ນຫາຜູ້ສະໜອງວັກຊີນທີ່ໃກ້ກັບທ່ານ.

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

10/6/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989.*